# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 15 ພຶສພາ 2022 (05-15-2022)

---

## *ວາງໃຈກຳນົດເວລາຂອງພຣະເຈົ້າ*

*ເວລາໃດທ່ານໄດ້ເຫັນດ້ວຍຕົນເອງວ່າກຳນົດເວລາເປັນທຸກສິ່ງ?*

***ຈຸດສຳຄັນໃນບົດຮຽນ:*** *ພຣະເຢຊູຈະກັບມາແນ່ນອນເຖິງແມ່ນວ່າເຮົາບໍ່ຮູ້ເວລາແນ່ນອນວ່າເມື່ອໃດ.*

***ພຣະຄັມພີຕອບສນອງຕໍ່ຊີວິດ:***

ເວລາຂອງທ່ານເຄີຍສັບສົນຈັກໜ້ອຍບໍ່? ໃນການເດີນທາງອອກໄປປະກາດຂ່າວປະເສີດຕ່າງປະເທດທີ່ອາຟຣິກາຂອງຂ້າພະເຈົ້າຄັ້ງແລກ. ຂ້າພະເຈົ້າໄດ້ມີອາການນອນບໍ່ຫຼັບໃຫຍ່ (jet lag). ເຮັດໃຫ້ຄວາມຮູ້ສຶກຂອງຂ້າພະເຈົ້າຕໍ່ເວລາຜິດປົກກະຕິໄປ. ຍາມນອນຂອງຂ້າພະເຈົ້າຜິດເວລາຢ່າງໃຫຍ່, ກາງເວັນເປັນກາງຄືນ ແລະກາງຄືນກໍເປັນກາງເວັນສັບສົນປົນເລກັນໄປໝົດ. ທັງທີ່ເປັນເວລາທ່ຽງຄືນ, ແຕ່ຮູ້ສຶກຄືກັນກັບເປັນຕອນເຊົ້າສຳລັບຂ້າພະເຈົ້າ.

ເມື່ອເວົ້າເຖິງການສະເດັດກັບມາຂອງພຣະຄຣິດ, ສ່ວນໃຫຍ່ມັນຄືກັນກັບວ່າເວລາຂອງເຮົາຄາດເຄື່ອນ. ຄົນເຂົ້າໃຈວ່າຜູ້ນຳທາງການເມືອງເປັນເຫດໃຫ້ເກີດຄວາມເສັຽຫາຍແລະສົງສັຍວ່າເພິ່ນເປັນຜູ້ຕໍ່ສູ້ພຣະຄຣິດ. ບາງເທື່ອຍາມສົງຄາມໜັກໜ່ວງ, ແຜ່ນດິນໄຫວ, ຫຼືເຫດຮ້າຍຕ່າງໆເຮັດໃຫ້ຜູ້ເຊື່ອບາງຄົນເຊື່ອວ່າການສະເດັດກັບມາຄັ້ງທີສອງຂອງພຣະຄຣິດໃກ້ເຂົ້າມາຈຳແຈຣົ້ວແລ້ວ. ແຕ່ໜ້າເສັຽດາຍ, ປວັດສາດຄຣິສຕະຈັກ ຮົກເຮື້ອໄປດ້ວຍການຄາດຄະເນຜິດເປັນແຖວ ກ່ຽວກັບການກັບມາຂອງພຣະຄຣິດ. ການຄາດຄະເນຜິດນີ້ກໍ່ຂຶ້ນໂດຍພວກຄຣູສອນຜິດຫຼັກທີ່ຫວັງຢາກຈະໄດ້ຜູ້ຕິດຕາມ. ໃນບາງກໍຣະນີ, ການຄາດຄະເນຜິດເກີດຂຶ້ນເພາະວ່າຜູ້ເຊື່ອຫົວສູງຕິດກັບດັກຂອງຄວາມຈອງຫອງຂອງເຂົາກ່ຽວກັບຍຸກສຸດທ້າຍແລະອ່ານເຫດການຜິດ.

ພຣະເຢຊູໄດ້ເວົ້າຫັຽງໄວ້ແດ່ກ່ຽວກັບເວລາການກັບມາຂອງພຣະອົງ? ພຣະຜູ້ເປັນເຈົ້າໄດ້ກ່າວສິ່ງນີ້ໃນ ມັດທາຍບົດ 24, ໃນຂໍ້ຄວາມພາກທີ່ພວກເຮົາຈະໄດ້ກວດເບິ່ງນີ້ ຂນະທີ່ພວກເຮົາຊອກຫາສິ່ງທີ່ພຣະເຢຊູໄດ້ກ່າວກ່ຽວກັບວັນສຸດທ້າຍ.

**ພຣະຄັມພີກ່າວວ່າແນວໃດ** : (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

1. **<u>ມັດທາຍ 24:32-33</u>.**

*32 "ຈົ່ງຮຽນຄຳອຸປມາຈາກຕົ້ນເດື່ອເທດ ເມື່ອກິ່ງກ້ານມັນແຕກໃບອ່ອນອອກພວກທ່ານກໍຮູ້ວ່າລະດູຮ້ອນໃກ້ຈະມາເຖິງແລ້ວ.*
*33 ຢ່າງນີ້ແຫຼະ, ພວກທ່ານກໍເໝືອນກັນ ເມື່ອເຫັນເຫດການເຫຼົ່ານັ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ.*

ໄດ້ອະທິຍາຍວ່າ ຄວາມວຸ້ນວາຍ (The turbulent) ຍຸກສຸດທ້າຍຈະເປັນຢ່າງໃດ, ພຣະເຢຊູປິດທ້າຍການກ່າວຄຳແນະນຳທ່ອນນີ້ດ້ວຍການນຳໃຊ້ ສາມຂໍ້ອ້ອມພາບປະກອບສາມຢ່າງ: ຕົ້ນເດື່ອເທດ, ໂນອາ, ແລະ ຂະໂມຍໃນຍາມກາງຄືນ. (ພວກເຮົາຈະສຶກສາເຣື່ອງທີສາມເທື່ອໜ້າ). ພຣະເຢຊູເລີ່ມຕົ້ນດ້ວຍຄຳອຸປມາກ່ຽວກັບຕົ້ນເດື່ອເທດ,ໃຊ້ມັນເພື່ອເຊື່ອມຕໍ່ຈາກການອະທິບາຍວ່າຕອນອາວະສານຈະເປັນຢ່າງໃດ ເພື່ອຕອບຄຳຖາມເບື້ອງຕົ້ນຂອງອັຄສາວົກ *"ຂໍໂຜດໃຫ້ພວກຂ້ານ້ອຍຊາບແດ່ວ່າເຫດການເຫຼົ່ານີ້ຈະເກີດຂຶ້ນໃນເວລາໃດ" (ມັດທາຍ 24:3).*

ເມື່ອພວກເຮົາພິຈາຣະນາຈຸດທີ່ພຣະເຢຊູຊີ້ເຖິງຕົ້ນເດື່ອເທດ, ພວກເຮົາຄວນຈື່ເພື່ອໃຫ້ຄຳອຸປມາຢືນຢັດດ້ວຍຕົວມັນເອງ

ເໝືອນກັນ. ຜູ້ສັງເກດເບິ່ງທັມມະຊາດຮູ້ດີວ່າພຣະເຢຊູເວົ້າກ່ຽວກັບອັນໃດ. ຕົ້ນເດື່ອເທດເປັນທີ່ຮູ້ຈັກກັນດີໃນອິສຣາເອນ. ຕົ້ນເດື່ອເທດປົ່ງໃບ ແລະໝາກຂຽວໃນທ້າຍຣະດູໃບໄມ້ປົ່ງ, ບອກທຸກຄົນວ່າ "ຣະດູຮ້ອນໃກ້ເຂົ້າມາ." ສະນັ້ນ, ພຣະຄຣິດຮັບປະກັນຜູ້ເຊື່ອວ່າ ເຖິງແມ່ນເຂົາບໍ່ສາມາດຮູ້ເວລາສະເພາະການກັບຄືນມາຂອງພຣະອົງ, ພວກເຂົາສາມາດຮູ້ເວລາທົ່ວໄປດ້ວຍການຊອມເບິ່ງໝາຍສຳຄັນ.

ພຣະເຢຊູເລີ່ມຕົ້ນຄຳອຸປມາໂດຍກ່າວວ່າ,"ຈົ່ງຮຽນຮູ້ຈາກຕົ້ນເດື່ອເທດ." ຄຳວ່າ <u>ຮຽນ</u> ໃນສາກນີ້ໝາຍຄວາມວ່າຍອມຮັບຄວາມຈິງຂອງການສອນ ແລະຊອກຫາການນຳໃຊ້ມັນຕໍ່ຊີວິດທ່ານ. ຄຳນີ້ບາງເທື່ອໃຊ້ບາງສິ່ງທີ່ກາຍເປັນນິສັຍຕລອດຊີວິດ. ພຣະຄຣິດຢາກໃຫ້ສາວົກຂອງພຣະອົງຮູ້ຈັກບົດຮຽນຕົ້ນໝາກເດື່ອເທດແລະນຳໄປໃຊ້ໃນສ່ວນເລິກຂອງຊີວິດຈິດໃຈຂອງເຂົາ.

ຈຸດຂອງຕົ້ນໝາກເດື່ອເທດແມ່ນວ່າພວກເຮົາສາມາດໄດ້ຄວາມຄິດທົ່ວໄປວ່າການກັບມາຂອງພຣະເຢຊູແມ່ນມໍ່ໆນີ້. *"ເມື່ອເຫັນເຫດການເຫຼົ່ານັ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ." ເມື່ອພຣະຄຣິດພ້ອມຈະກັບມາແລ້ວ, ຂ່າວດີທີ່ສຸດແມ່ນວ່າພຣະເຢຊູເອງຈະຢູ່ໃກ້. ກະສັດແຫ່ງສວັນຈະຢູ່ທີ່ປະຕູ, ກະຕືລືລົ້ນທີ່ຈະເຂົ້າມາໃນ.*

*ເປັນຫຍັງຈຶ່ງສຳຄັນທີ່ພຣະເຢຊູໃຫ້ໝາຍສຳຄັນແກ່ຜູ້ຕິດຕາມພຣະອົງ?*

ເມື່ອສຸດປາຍໃກ້ເຂົ້າມາ, ຄຳທຳນວາຍໃນບົດຈະເຂົ້າກັບປວັດສາດເໝາະພໍດີໃນວັນນັ້ນ. ບັນຫາທັມມະດາຂອງແຕ່ລະລຸ້ນຂອງຜູ້ເຊື່ອແມ່ນການທົດລອງ ເພື່ອບັງຄັບຄຳທຳນວາຍຍຸກສຸດທ້າຍໄປສູ່ເຫດການໃນຍຸກສມັຍຂອງເຂົາ. ຜູ້ສັງເກດທີ່ສລາດໃນປວັດສາດສາມາດເຂົ້າໃຈວ່າເມື່ອໝາຍສຳຄັນກຳລັງເກີດຂຶ້ນ, ນັ້ນໝາຍຄວາມວ່າການສະເດັດກັບມາຂອງພຣະຄຣິດກໍໃກ້ແລ້ວ, ເຖິງແມ່ນວ່າເວລາສະເພາະເຈາະຈົງຈະລຶກລັບກໍຕາມ.

ມີການໂຕ້ແຍ້ງບາງຢ່າງກ່ຽວກັບຄວາມໝາຍສະເພາະຂອງປໂຍກ "ເຫດການເຫຼົ່ານີ້" ໃນຂໍ້ 33. ບາງຄົນເຊື່ອວ່າມັນອ້າງເຖິງການລົ້ມສລາຍຂອງກຸງເຢຣູຊາເລັມໂດຍສະເພາະ. ການຕີຄວາມໝາຍເປັນໄປໄດ້ຫຼາຍກວ່ານັ້ນແມ່ນວ່າພຣະຄຣິດໄດ້ອ້າງເຖິງໝາຍສຳຄັນຂອງການກັບມາຄັ້ງທີສອງຂອງພຣະອົງທີ່ພຣະອົງໄດ້ກ່າວມາແລ້ວໃນຂໍ້ 24. ບໍ່ວ່າຄວາມໝາຍແທ້ຂອງການກັບຄືນມາຈະເປັນແນວໃດກໍຕາມ, ຄວາມຫວັງວ່າການກັບຄືນຂອງພຣະຄຣິດຈະເພີ້ມການວາງໃຈຂອງຜູ້ເຊື່ອໃນພຣະເຈົ້າຖ້າມກາງຄວາມຫຍຸ້ງຍາກໃນຊີວິດ.

**2. <u>ມັດທາຍ 24:34-35</u>.**

34 *ເຮົາບອກພວກທ່ານຕາມຄວາມຈິງວ່າ ຄົນໃນສມັຍນີ້ຈະບໍ່ລ່ວງລັບໄປກ່ອນເຫດການທັງປວງນີ້ບັງເກີດຂຶ້ນ.* 35 *ຟ້າແລະດິນກໍຈະລ່ວງພົ້ນໄປ ແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ."*

ພຣະເຢຊູເຮັດໃຫ້ສາວົກຕື່ນຕົວຕໍ່ຄວາມສຳຄັນຂອງຖ້ອຍຄຳຂອງພຣະອົງຕໍ່ໄປໂດຍການປະກາດວ່າ, "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ." ພຣະອົງຢາກໃຫ້ພວກເຂົາເອົາໃຈໃສ່ຖ້ອຍຄຳຕໍ່ໄປຂອງພຣະອົງ: *ຟ້າແລະດິນກໍຈະລ່ວງພົ້ນໄປແຕ່ຖ້ອຍຄຳຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ."* ແຕ່ວ່າແມ່ນໃຜເປັນຜູ້ທີ່ຖືກລວມເຂົ້າໃນລຸ້ນນີ້ແທ້?

ນັກສຶກສາພຣະຄັມພີບາງຄົນເຊື່ອວ່າລຸ້ນນີ້ໝາຍເຖິງຄົນທີ່ປະຕິເສດພຣະຄຣິດເວລາພຣະອົງຢູ່ໃນໂລກນີ້. ພວກອື່ນເຊື່ອວ່າ, ອີງຕາມສາເຫດອື່ນໆໃນ ມັດທາຍ 24 ອ້າງເຖິງການລົ້ມສລາຍຂອງພຣະວິຫານ, ພຣະເຢຊູອ້າງເຖິງລຸ້ນຍັງມີຊີວິດໃນ ຄສ 70. ໃນເວລາບໍ່ດົນຜ່ານມາ, ຢ່າງໃດກໍຕາມ, ຄົນຈຳນວນນຶ່ງໂຕ້ແຍ້ງວ່າລຸ້ນນີ້ໝາຍເຖິງຄົນທີ່ຈະມີຊີວິດຢູ່ເວລາເຫດການໃນມັດທາຍ 24-25 ກ່ຽວຂ້ອງກັບການສະເດັດກັບມາຄັ້ງທີສອງຂອງພຣະຄຣິດເກີດຂຶ້ນ. ມັນຂ້ອນຂ້າງເປັນໄປໄດ້ທີ່ພຣະເຢຊູຄິດໃນໃຈທັງການທຳລາຍພຣະວິຫານແລະເຫດການກ່ອນການກັບມາຂອງພຣະອົງ. ກ່ອນໜ້ານີ້, ໃນຂໍ້ 3, ຄຳຖາມຂອງສາວົກແມ່ນກ່ຽວກັບເຫດການທັງສອງ. ເຫດການທີ່ໄດ້ກ່າວເຖິງໃນຂໍ້ 4-20 ຊີ້ໄປຫາການທຳລາຍພຣະວິຫານ, ແຕ່ເຫດການອະ

ທິບາຍໃນຂໍ້ 21-31 ເປັນການປ່ຽນແປງຂນາດໃຫຍ່ກວ່າແລະອ້າງເຖິງຍຸກການສະເດັດກັບມາຂອງພຣະຄຣິດ. ພຣະເຢຊູໄດ້ກ່າວຢ່າງໜັກແໜ້ນກ່ຽວກັບຄວາມໜ້າເຊື່ອຖືໃນການສອນຂອງພຣະອົງ. ພຣະຄຣິດໄດ້ເນັ້ນໜັກຄວາມສັດຊື່ຂອງພຣະອົງເອງໃນເວລາທີ່ພຣະອົງກ່າວວ່າ,*"ຟ້າແລະດິນກໍຈະລ່ວງພົ້ນໄປ ແຕ່ຖ້ອຍຄໍາຂອງເຮົາຈະບໍ່ລ່ວງພົ້ນໄປຈັກເທື່ອ."* ມັນເປັນໄປບໍ່ໄດ້ທີ່ຈະປ່ຽນແປງຫຼືປະຕິເສດສິ່ງທີ່ພຣະເຈົ້າໄດ້ກ່າວໄວ້ໃນພຣະທັມຂອງພຣະອົງ. ເຮົາຄົງຈໍາໄດ້ວ່າຖ້ອຍຄໍາຂອງພຣະເຢຊູໜັກແໜ້ນກວ່າຮາກຖານຂອງແຜ່ນດິນໂລກແລະຄືກັບຮາກຖານຂອງສວັນ (ມັດທາຍ 7:24-27). ບໍ່ມີຫຍັງແນ່ນອນກວ່າຖ້ອຍຄໍາຂອງພຣະຄຣິດ. ສິ່ງໃດທີ່ຖືກແຕະຕ້ອງດ້ວຍບາບຈະລ່ວງພົ້ນໄປ, ແຕ່ຄວາມບໍ່ສົມບູນຈະບໍ່ພົບໃນພຣະທັມຂອງພຣະເຈົ້າ. ພຣະທັມຂອງພຣະເຈົ້າຈະຄົງບໍຣິສຸດ ແລະສົມບູນເພາະວ່າ *"ຖ້າພຣະອົງຊົງເອີ້ນຜູ້ຮັບພຣະທັມຂອງພຣະເຈົ້າວ່າ ເຂົາເປັນພຣະ (ພຣະຄັມພີນັ້ນຈະຖືກລົບລ້າງເສຍບໍ່ໄດ້") (ໂຢຮັນ 10:35).* ພຣະທັມຂອງພຣະເຈົ້າຈະຕັ້ງຢູ່ເຖິງແມ່ນຫຼັງຈາກ "ແຜ່ນດິນໂລກແລະສວັນລ່ວງພົ້ນໄປ."

*ເວລາໃດທີ່ພຣະທັມຂອງພຣະເຈົ້າໄດ້ພິສູດໃຫ້ເຫັນວ່າເປັນຈິງໃນຊີວິດຂອງທ່ານ?*

**3. <u>ມັດທາຍ 24:36-41</u>.**

*36 "ແຕ່ເຣື່ອງວັນແລະໂມງນັ້ນບໍ່ມີໃຜຮູ້ ແມ່ນເທວະດາໃນສວັນຫຼືພຣະບຸດກໍບໍ່ຮູ້ ຮູ້ແຕ່ພຣະບິດາອົງດຽວ. 37 ດ້ວຍວ່າສມັຍຂອງ*
*ໂນອາໄດ້ເປັນຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ. 38 ເພາະວ່າເມື່ອກ່ອນວັນນໍ້າຖ້ວມນັ້ນຄົນທັງຫຼາຍໄດ້ກິນ*
*ແລະດື່ມ, ໄດ້ແຕ່ງງານແລະຍົກໃຫ້ເປັນຜົວເມັຽກັນ, ຈົນເຖິງວັນທີ່ໂນອາໄດ້ເຂົ້າໄປໃນນາວາ, 39 ແລະນໍ້າໄດ້ມາຖ້ວມກວາດ*
*ເຂົາໄປໂດຍບໍ່ທັນໄດ້ຮູ້ຕົວຢ່າງໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນຢ່າງນັ້ນ. 40 ເມື່ອນັ້ນຈະມີຊາຍສອງຄົນຢູ່ທົ່ງນາຈະຊົງ*
*ຮັບຄົນນຶ່ງໄປ ຈະຊົງປະຄົນນຶ່ງໄວ້. 41 ຈະມີຍິງສອງຄົນກໍາລັງໂມ້ແປ້ງຢູ່ທີ່ໂຮງໂມ້ ຈະຊົງຮັບຄົນນຶ່ງໄປ ຈະຊົງປະຄົນນຶ່ງໄວ້.*

ຂໍ້ 36, ຄໍາສອນຂອງພຣະເຢຊູກ່ຽວກັບເວລາການສະເດັດກັບມາຂອງພຣະອົງ, ອາດເປັນຂໍ້ພຣະຄັມພີທີ່ຮູ້ຈັກດີທີ່ສຸດໃນຄໍາບັລຍາຍຂອງໂອລີບເວັຕ. ຂໍ້ນີ້ເປັນການເຕືອນທີ່ເຂັ້ມແຂງທີ່ຈະຂັດຂວາງພວກເຮົາຈາກການກໍານົດວັນທີ່ສະເພາະສໍາລັບການສະເດັດກັບມາຄັ້ງທີສອງຂອງພຣະຄຣິດ. ໜ້າເສັຽດາຍ, ຖ້ອຍຄໍາຈາກພຣະເຢຊູນີ້ໄປຕໍ່ຕ້ານຄວາມຢາກຮູ້ຢາກເຫັນທັງໝົດຂອງມະນຸດ. ພວກເຮົາມີແນວໂນ້ມທີ່ຈະຢາກຮູ້ວ່າມີບາງສິ່ງບາງຢ່າງເກີດຂຶ້ນ.

*ມັນເປັນປໂຍດແນວໃດແທ້ໆທີ່ພຣະເຢຊູບໍ່ໄດ້ໃຫ້ເວລາຫຼືວັນທີສະເພາະສໍາລັບການກັບມາຂອງພຣະອົງ?*

ເມື່ອພຣະເຢຊູເວົ້າວ່າ "ບໍ່ມີໃຜຮູ້" ວັນຫຼືໂມງ, ເປັນຄໍາເຕືອນວ່າມີບາງສິ່ງຊຶ່ງເຮົາບໍ່ຕ້ອງການຮູ້. ຖ້າພວກເຮົາຮູ້ລາຍລະອຽດທຸກຢ່າງຂອງແຜນການຂອງພຣະເຈົ້າ, ພວກເຮົາມີຄວາມເປັນໄປໄດ້ຫຼາຍທີ່ຈະອອກຈາກ "ເກມຝ່າຍວິນຍານຂອງພວກເຮົາ." ລາຍລະອຽດເຫຼົ່ານັ້ນທີ່ຂາດໄປ ໄດ້ຄວາມໝາຍວ່າເພື່ອໃຫ້ພວກເຮົາມີການຕຽມຕົວທີ່ດີກວ່າ.

ພຣະເຢຊູຍົກໃຫ້ເຫັນພາບອຸປນິສັຍຂອງຄົນທີ່ບໍ່ເຊື່ອໃນເວລາສິ້ນຍຸກ ດ້ວຍການໃຊ້ເຣື່ອງທີ່ຮູ້ຈັກກັນດີທີ່ສຸດຈາກພຣະຄັມພີເດີມ:ໂນອາ. "ສມັຍຂອງໂນອາ" ເປັນລະຍະທີ່ມືດມົນທີ່ສຸດໃນປວັດສາດຂອງມະນຸດ. "ຄວາມຊົ່ວຊ້າ" ຂອງມະນຸດ, ເຖິງຢ່າງກໍຕາມ, ຈະເປັນຊີວິດສັ້ນ (ປະຖົມການ 6:5-7). ການພິພາກສາຂອງພຣະເຈົ້າໄດ້ຖືກບັງຄັບໃຊ້, ແຕ່ບໍ່ໄດ້ມາໂດຍປາສຈາກການເຕືອນ. ຄົນໃນສມັຍຂອງໂນອາມີຫຼາຍປີເພື່ອສັງເກດໂນອາສ້າງນາວາ. ເຂົາມີເວລາຫຼວງຫຼາຍເພື່ອໄດ້ຍິນຄໍາພຍານຈາກໂນອາກ່ຽວກັບການພິພາກສາ (2 ເປໂຕ 2:5). ແຕ່ຄົນເຫຼົ່ານັ້ນບໍ່ໄດ້ຮັບຮູ້ຄໍາເຕືອນຈົນກວ່າສາຍເກີນໄປ. "ພວກເຂົາບໍ່ຮູ້ຈົນກວ່ານໍ້າຖ້ວມມາເຖິງແລະກວາດເອົາເຂົາໄປໝົດ." ຄົນຈະມີແນວຄິດດຽວກັນເວລາພຣະຄຣິດກັບມາ. ພວກເຮົາບໍ່ຄວນຈົມຢູ່ໃນເວລາປະຈຸບັນແລະຊີວິດປະຈຸບັນຂອງເຮົາຈົນລືມເຣື່ອງນິຣັນ. ພຣະເຢຊູວາດພາບໃຫ້ເຫັນຈຸດຂອງພຣະອົງ ໂດຍການອະທິບາຍວ່າຄົນຈໍານວນນຶ່ງ "ຊຶ່ງຈະຖືກຮັບໄປ" ຂນະທີ່ຄົນອື່ນຈະຖືກປະໄວ້. ບາງຄົນເລັງເຖິງການຮັບຂຶ້ນໄປພົບກັບພຣະຄຣິດໃນອາກາດດ້ວຍຄວາມປິຕິຍິນດີຢ່າງຍິ່ງຂອງຄຣິສຕະຈັກ-"ການຮັບໄປຢ່າງລຶກລັບ" ຂອງພວກທີ່ເຊື່ອທຸກຄົນທີ່ຈະເກີດ

ຂຶ້ນກ່ອນເວລາຄວາມຍາກລຳບາກອັນໃຫຍ່. ຄົນອື່ນເບິ່ງສິ່ງນີ້ວ່າເປັນການພິພາກສາທັນທີທັນໃດທີ່ຈະມາສູ່ຜູ້ບໍ່ເຊື່ອໃນເວລາການກັບມາຂອງພຣະຄຣິດ. ພວກເຂົາຮັກສາວ່າຜູ້ບໍ່ເຊື່ອຈະຖືກປະໄວ້ແລະກຳຈັດອອກໄປ, ເໝືອນດັ່ງຄົນອະທັມໄດ້ຖືກກຳຈັດອອກແລະຖືກພັດໄປໃນນໍ້າ. ພາບເຮັດໃຫ້ສິ່ງນີ່ງຈະແຈ້ງ: ຍຸກ ສຸດທ້າຍຈະໝາຍເຖິງການແຍກຢ່າງແຈ່ມແຈ້ງລະຫວ່າງຜູ້ເຊື່ອແລະຜູ້ບໍ່ເຊື່ອ. ລັກສນະການເປີດເຜີຍຈະເຊື່ອມຕໍ່ກັບການສະເດັດມາຂອງອົງພຣະຜູ້ເປັນເຈົ້າ. ເວລາພຣະຄຣິດສະເດັດກັບມາ, ພຣະອົງຈະເຜີຍແບທົວໃຈຂອງຄົນທັນທີທັນໃດ ແລະເປີດເຜີຍວ່າເຂົາເປັນຄົນຢ່າງໃດແທ້. ຈົນກວ່າເວລານັ້ນຈະມາເຖິງ, ໃຫ້ເຮົາເຮັດທຸກສິ່ງຈົນສຸດຄວາມສາມາດທີ່ຈະເຮັດໄດ້ເພື່ອໃຫ້ຄົນອື່ນຈະເຂົ້າຮ່ວມກັບເຮົາໃນສະຖານທີ່ຊົງສະຖິດຢູ່ຂອງພຣະຄຣິດຕລອດໄປ.

*ໃນທາງໃດແດ່ທີ່ພວກເຮົາສາມາດກາຍເປັນຄົນໄປທາງຂ້າງດ້ວຍການສົນທະນາຍຸກສຸດທ້າຍ?*

## ນຳໃຊ້ໃນຊີວິດ

ພຣະເຢຊູຄຣິດຈະສະເດັດມາແນ່ນອນເຖິງແມ່ນວ່າເຮົາຈະບໍ່ຮູ້ແນ່ນອນວ່າເມື່ອໃດ. ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

- **ຈົ່ງສະທ້ອນ:** ຈົ່ງດຳເນີນຊີວິດໃນມື້ນີ້ຕາມແບບການດຳເນີນຊີວິດຖ້າວ່ານີ້ແມ່ນມື້ສຸດທ້າຍຂອງທ່ານກ່ອນພຣະຄຣິດຈະສະເດັດກັບມາ. ໂດຍຜ່ານທາງພຣະຄັມພີພຣະເຢຊູຍົກຕົວຢ່າງຫຼາຍອັນເພື່ອຊີ້ໃຫ້ເຫັນເຖິງຄວາມກະທັນທັນແລະບໍ່ຄາດຄິດຂອງການສະເດັດກັບມາຂອງພຣະອົງ. ທາງເລືອກດຽວຂອງຜູ້ເຊື່ອແມ່ນຕຽມພ້ອມຢູ່ສເມີ. ເຮັດໃຫ້ວັນນີ້ຖືກນັບໂດຍການຄິດເຖິງການກະທຳ,ວາຈາ, ແລະການວາງຕົວຂອງທ່ານໃນຄວາມສວ່າງຂອງການສະເດັດກັບມາຂອງພຣະຄຣິດ.
- **ຈົ່ງອ່ານ:** ຈົ່ງກັບໄປແລະອ່ານເຣື່ອງຂອງໂນອາ ຈາກປະຖົມການ 6-8. ມັນອາດດົນສົມຄວນແລ້ວຕັ້ງແຕ່ທ່ານໄດ້ກັບໄປທົບທວນຂໍ້ຄວາມຂອງບົດເຣື່ອງທີ່ຊົງຣິດອຳນາດນັ້ນ. ການອ່ານມັນສາມາດຊ່ວຍທ່ານຈັບເອົາຄວາມເຂົ້າໃຈບົດຮຽນວັນນີ້ດ້ວຍຄວາມເຂັ້ມຂົ້ນທີ່ໃຫຍ່ກວ່າ.
- **ຈົ່ງທ່ອງຈຳ.** ຈົ່ງທ່ອງຈຳ ພຣະບັນຍັດສອງ 29:29. ພຣະຄັມພີຂໍ້ນີ້ສະແດງໃຫ້ເຮົາວ່າແມ່ນສິດທິຂອງພຣະເຈົ້າທີ່ກັກຂໍ້ມູນຈາກເຮົາ. ໃນເມື່ອທາງຂອງພຣະເຈົ້າສູງກວ່າທາງຂອງເຮົາຫຼາຍ, ມັນເປັນທີ່ເຂົ້າໃຈວ່າພຣະເຈົ້າກັກບາງສິ່ງພວກເຮົາບໍ່ສາມາດເຂົ້າໃຈໄດ້. ຄວາມຈິງນີ້ໃຫ້ພົນພວກເຮົາເລິກກວ່າ ເພື່ອໃຫ້ເຂົ້າໃຈພຣະທັມພຣະເຈົ້າໃນ ມັດທາຍ 24:36.

ມັນເປັນສິ່ງນຶ່ງທີ່ມີກຳນົດເວລາຂອງພວກເຮົາຄາດເຄື່ອນເມື່ອເຖິງຄາວນອນບໍ່ຕົງເວລາ. ແຕ່ຜົນກັມນິຣັນຂອງການບໍ່ຕຽມພ້ອມສຳລັບການກັບມາຂອງພຣະຄຣິດເປັນສິ່ງອື່ນທັງໝົດ. ໃຫ້ເຮົາຕຽມພ້ອມ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**